# ບົດທີ 11

# ການສອນພະຄຳພີປະຈຳໃນເຮືອນ

ປານນີ້ພວກທ່ານບາງຄົນ ອາດຈະວ່າ “ຂອບໃຈຫຼາຍທີ່ສອນມາເລື່ອງວິທີເທດສະໜາ ເຂົ້າໃຈດີຢູ່ ແຕ່ຍັງມີບັນຫາປະການໜຶ່ງ”




## ຂ້ອຍບໍ່ກ້າເທດ

ເວລານີ້ໃຈຂ້ອຍເຕັ້ນແຮງ ເພາະຄວາມຕື່ນເຕັ້ນ ອອກຮ້ອນຕົນຕົວມຸດມັດແລະ ໃບໜ້າເຫື່ອຈີນ ແຕກອອກແຄ່ງຂາກໍ່ສັ່ນເວົ້າບໍ່ຢາກອອກດີຄໍແຫ້ງ ຄິດບໍ່ອອກວ່າຈະເທດສະໜາຢ່າງໃດດີ ຈະເວົ້າແລະ ສະແດງທ່າທາງຢ່າງໃດ?

*ບໍ່ເປັນຫຍັງຫຼາຍຄົນເປັນຢ່າງນັ້ນ ແຕ່ເຖິງຢ່າງໃດກໍ່ຕາມເຖິງທ່ານຈະບໍ່ຢືນຕໍ່ໜ້າທີ່ປະຊຸມເທື່ອກໍ່ຕາມແຕ່ທ່ານຍັງ ສອນພະຄຳພີໃນເຮືອນກໍ່ໄດ້. ໃນບົດຮຽນນີ້ເຮົາຈະຮຽນສະເພາະເລື່ອງນັ້ນແຫຼະ!*

**1** ຜູ້ທີ່ຢືນຕໍ່ໜ້າທີ່ປະຊຸມໃນໜ້າປົກບົດນີ້ ຮູ້ພະຄຳພີຢູ່ແລ້ວພຽງແຕ່ບໍ່ກ້າເວົ້າເທື່ອໃດທີ່ຢືນຕໍ່ໜ້າໝູ່ ເຫື່ອແຕກ ອອກແລະປາກບໍ່ອອກແປວ່າເພິ່ນຮູ້ສຶກຢ່າງໃດ? _______________

**2** ແຕ່ຖ້າວ່າຢູ່ກັບໝູ່ໜ້ອຍຄົນອາດຈະບໍ່ຢ້ານຫຼາຍປົກກະຕິເວົ້າຕໍ່ໜ້າໝູ່ໜ້ອຍຄົນຈະງ່າຍກວ່າຫຼືຍາກກວ່າ? _______________________________________________

**3** ດັ່ງນັ້ນຜູ້ໃດທີ່ຢ້ານເທດສະໜາໃນປະຊຸມໃຫຍ່ອາດຈະເທດສະໜາໃນປະຊຸມນ້ອຍກໍ່ໄດ້ເພາະເຫດໃດ? _______________________________________________

**4** ການຮຽນພະຄຳພີໃນແຕ່ລະເຮືອນອາດຈະເປັນຜົນປະໂຫຍດຫຼາຍປະການ. ໃນປະຊຸມໃຫຍ່ຜູ້ໃດຢາກຖາມບໍ່ມີ ໂອກາດຖາມຜູ້ໃດບໍ່ມີສ່ວນເຂົ້າໃຈຫຼືມີຂໍ້ທີ່ສົງໄສບໍ່ກ້າຍົກສະເໜີເລື່ອງແຕ່ໃນປະຊຸມໝູ່ໜ້ອຍຄົນຄືຢູ່ໃນເຮືອນມີໂອກາດຢ່າງໃດ? (ໃຫ້ເລືອກໝາຍເອົາຂໍ້ທີ່ຖືກ)

ກ. ມີແຕ່ຜູ້ນຳທີ່ເວົ້າ.

ຂ. ມີແຕ່ຄົນມີການສຶກສາມີສິດເວົ້າ.

ຄ. ໝົດທຸກຄົນມີສິດເວົ້າຢູ່

**5** ມີຫຼາຍເທື່ອທີ່ ພະເຢຊູເປີດໂອກາດໃຫ້ຄົນມາຖາມຫຼືສົນທະນາເລື່ອງຄຳສອນຂອງພະອົງ. ໃນຕອນພະຄຳພີຕໍ່ ໄປນີ້ ມີ ຕອນໃດທີ່ ພະເຢຊູເປີດໂອກາດຢ່າງນັ້ນ? (ໃຫ້ເລືອກໝາຍເອົາຂໍ້ທີ່ຖືກ)

| | |
|---|---|
| ກ. ມັດທາຍ 16:13-16 | ຈ. ມທ 22:41-43 |
| ຂ. ມທ 19:16-21 | ສ. ລູກາ 10:2-9 |
| ຄ. ມທ 22:1-14 | ຊ. ລູກາ 10:25-29 |
| ງ. ມທ 22:16-21 | ຍ. ລູກາ 10:36-37 |

**6** ການສອນພະຄຳພີໃນເຮືອນໄດ້ປຽບຢ່າງໜ້ອຍ 2 ປະການ.

ກ. ແມ່ນຜູ້ໃດບໍ່ຕ້ອງຢ້ານປານໃດ? ______________________________

ຂ. ແມ່ນຝ່າຍໃດມີໂອກາດຖາມ? ______________________________

**7** ປະໂຫຍດປະການໜຶ່ງໃນການຮຽນພະຄຳພີຢູ່ໃນເຮືອນຄື: ຜູ້ມາຮຽນແລະຜູ້ນຳຈະນັ່ງລວມກັນແລ້ວຜູ້ຟັງມີໂອ ກາດເວົ້າອາດຈະຕ້ອງຟັງດ້ວຍ.

ທຳມະດາໃນປະຊຸມນະມັດສະການຄົນມາຟັງຈະນັ່ງຕາມຮູບແບບໃດ? ___________ ເມື່ອຢູ່ໃນເຮືອນເດ? ______




**8** ກ. ສ່ວນຝ່າຍຜູ້ນຳການຮຽນໃນເຮືອນໄດ້ປຽບຫຍັງ? ________________________

ຂ. ສ່ວນຝ່າຍຜູ້ມາຮຽນເດ? ______________________________________

**9** ຖ້າວ່າຈະສຶກສາພະຄຳພີຢູ່ໃນເຮືອນ

ຄວນຈະນັ່ງຢ່າງໃດດີກວ່າ?

(ໃຫ້ແຕ້ມຮູບໃສ່ຂ້າງຂວານີ້)

**10** ຖ້າຄົນທີ່ຈະສຶກສາພະຄຳພີນຳກັນນັ້ນຈະນັ່ງແບບວົງມົນເຂົາເຫັນໜ້າຕາເຊິ່ງກັນແລະກັນໄດ້ ຈຶ່ງເປັນກັນເອງໄດ້ ງ່າຍ. ເໝາະສົມທີ່ຈະເປັນກັນເອງໄດ້ ແຕ່ຍັງຕ້ອງຮຽນເອົາຕາມລຳດັບດ້ວຍ ບໍ່ໃຫ້ເປັນການສົນທະນາໜັກລ້າ ໆ. ຕໍ່ໄປນີ້ມີ ບາດກ້າວ 4 ປະການທີ່ເໝາະສົມເພື່ອການຮຽນ ພະຄຳພີຮ່ວມກັນໃນເຮືອນ. ໃຫ້ທ່ານຈົດເລກແຕ່ 1-4 ໃສ່ໃຫ້ຖືກຕາມລຳດັບເໝາະສົມ.

______ ກ. ອ້ອນວອນໃຫ້ ພະເຈົ້າຊ່ວຍໃນການປະຕິບັດຊີວິດຕາມບົດຮຽນທີ່ຮຽນມາແລ້ວ.

______ ຂ. ແລກປ່ຽນຄວາມຄິດເຫັນກັນເລື່ອງຄວາມໝາຍໃນຕອນພະຄຳພີແລະວິທີການນຳມາໃຊ້.

______ ຄ. ອ່ານຈາກຕອນພະຄຳພີທີ່ຈະຮ່ວມສຶກສານັ້ນ.

______ ງ. ອ້ອນວອນຂໍໃຫ້ພະວິນຍານມາຊ່ວຍໃຫ້ເຂົ້າໃຈຕອນພະຄຳພີທີ່ຈະສຶກສາ.

**11** ໃຫ້ທ່ານຕື່ມຄວາມທີ່ຂາດໃນບາດກ້າວທີ່ຈະສຶກສາພະຄຳພີ 4 ປະການ.

ກ. ຈົ່ງ ________________________ ຕໍ່ ພະເຈົ້າ ໃຫ້ຊົງນຳໃນການຮຽນ.

ຂ. ຈົ່ງ ________________________ ຕອນພະຄຳພີກ່ອນ.

ຄ. ຈົ່ງແລກ __________________________________ ເລື່ອງຕອນພະຄຳພີນັ້ນ.

ງ. ຈົ່ງ ________________________ ຂໍ ພະເຈົ້າ ໃຫ້ຊົງໂຜດດຳເນີນຊີວິດຕາມທີ່ຮຽນມາ.

**12** ທຸກເທື່ອທີ່ຈະຮຽນພະຄຳພີດ້ວຍກັນເຮົາຈົ່ງອ້ອນວອນຂໍໃຫ້ ພະເຈົ້າມາຊົງນຳໃນການຮຽນຮູ້ຕາມນ້ຳພະໄທຂອງ ພະອົງຫຼັງຈາກຄຳອ້ອນວອນແລ້ວຄວນມີຜູ້ໜຶ່ງອອກສຽງອ່ານພະຄຳພີໃຫ້ໝູ່ຟັງ. ໃນ 4 ຄົນຕໍ່ໄປນີ້ ທ່ານອາດຈະເລືອກຜູ້ໃດມາອອກສຽງອ່ານໃຫ້ໝູ່ຟັງ? (ເລືອກໝາຍເອົາຂໍ້ທີ່ຖືກ)

ກ. ຜູ້ທີ່ມັກປາກຫຼາຍແຕ່ອ່ານບໍ່ໄດ້ດີ.

ຂ. ຄົນຂີ້ອາຍບໍ່ຢາກປາກແລະອ່ານບໍ່ໄດ້ດີ.

ຄ. ຜູ້ມັກປາກຢູ່ສະເໝີແລະອ່ານໄດ້ດີດ້ວຍ.

ງ. ຜູ້ທີ່ໜ້າອາຍປາກແຕ່ອ່ານໄດ້ດີຫຼາຍ.

**13** ທ່ານເຊິ່ງເປັນຜູ້ນຳໃນການສອນພະຄຳພີ ລັບຜິດຊອບໃຫຍ່ຫຼາຍ. ອ້ອນວອນແລະອ່ານພະຄຳພີສຳເລັດແລ້ວ ທ່ານອາດຈະເປັນຜູ້ນຳໜ້າໃນການອະທິບາຍຫຼືການໃຫ້ໝູ່ແລກປ່ຽນຄວາມຄິດເຫັນກັນເລື່ອງຕອນພະຄຳພີນັ້ນແຕ່ທ່ານຈົ່ງຕຽມຕົວໄວ້ກ່ອນ ດີ ໆ. ຖ້າທ່ານບໍ່ຕຽມຕົວຈະປາກົດອອກມາດັ່ງຕໍ່ໄປນີ້:

ການຮຽນນັ້ນຈະບໍ່ເປັນລະບຽບ ຈະບໍ່ປຶກສາຫາລືກັນເລື່ອງພະຄຳພີ ຫຼື ຈະມີແຕ່ຄວາມງຽບ ບໍ່ມີໃຜຈະເວົ້າເລີຍດັ່ງນັ້ນ **ທ່ານຈື່ງຕຽມຕົວໄວ້ ດີ ໆ ກ່ອນເນີ!**

ວິທີຕຽມຕົວໄວ້ກ່ອນວິທີໜຶ່ງຄື: ແຕ່ງລາຍຊື່ຄຳຖາມກ່ອນ ແຕ່ງຄວາມຖາມຢ່າງທີ່ຈະບັງຄັບໃຫ້ເຂົາ ຄິດເຖິງຄວາມໝາຍໃນຕອນພະຄຳພີ ແລະ ການນຳຕອນພະຄຳພີມາໃຊ້ໃນຊີວິດຂອງເຂົາ. ການນັ້ນຈະໃຫ້ເຂົາເອງຄົ້ນພົບຄວາມຈິງໃນພະຄຳພີ.

ທ່ານຕ້ອງຕັດສິນໃຈລ່ວງໜ້າວ່າ ມີຈຸດໃດແດ່ທີ່ສຳຄັນໃນຕອນພະຄຳພີນັ້ນ ທ່ານຮູ້ຈັກວິທີຮຽນພະຄຳພີ ຕ່າງ ໆ ມາແລ້ວ. ຍົກຕົວຢ່າງ ທ່ານອາດຈະເລືອກສອນເລື່ອງໄທຊາມາເລຍຜູ້ໃຈດີ ຈາກ ລູກາ 10:30-37 ໃຫ້ທ່ານກວດເບິ່ງຄຳເວົ້າ 5 ປະການຕໍ່ໄປນີ້ແລ້ວໝາຍປະການໃດແດ່ທີ່ຈະເປັນຜົນປະໂຫຍດໃນການຮຽນ.

ກ. ຜູ້ທີ່ເດີນທາງຜູ້ດຽວອາດຈະພົບການອັນຕະລາຍ.
ຂ. ໄທຊາມາເລຍຜູ້ໃຈດີ ພ້ອມເຕັມໃຈຈະຊ່ວຍຄົນຜູ້ທຸກຍາກ.
ຄ. ໄທຊາມາເລຍໃຈດີຊ່ອຍຄົນທີ່ບໍ່ເປັນພັກພວກດຽວກັນ.
ງ. ຮຽນເລື່ອງວິທີປົວບາດແຜນັ້ນ
ຈ. ໄທຊາມາເລຍຜູ້ໃຈດີນັ້ນ ບໍ່ແມ່ນແຕ່ຈະຮັກສາຄົນນັ້ນໃນທັນທີຢ່າງດຽວ ແຕ່ເພິ່ນຈັດໃຫ້ມີຄົນຮັກສາໄວ້ໃນອານາຄົດອີກດ້ວຍ.

**14** ປາກົດວ່າມີຈຸດສຳຄັນ 3 ປະການໃຫຍ່ໃນຄຳອຸປະມານີ້ຄື:
ຈຸດທີ 1. ໄທຊາມາເລຍເປັນຕົວຢ່າງໃນການຊ່ອຍຄົນທຸກຍາກ
ຈຸດທີ 2. ເປັນຕົວຢ່າງໃນການຊ່ວຍຄົນທີ່ບໍ່ເປັນພັກພວກດຽວກັນ.
ຈຸດທີ 3. ແລ້ວເພິ່ນກໍຍັງຊ່ວຍຢູ່ ເຖິງຈະເສຍເງິນສ່ວນຕົວກໍ່ຕາມ.
ຄຳຖາມຕໍ່ໄປນີ້ຄືຄຳຖາມຢ່າງທີ່ເຮົາສະເໜີ ເພື່ອໃຫ້ເຂົາສັງເກດຈຸດສຳຄັນ 3 ປະການນັ້ນ. ໃຫ້ທ່ານເອົາຄຳຖາມຕໍ່ໄປນີ້ມາປຽບກັບຈຸດສຳຄັນ 3 ປະການຂ້າງເທິງນັ້ນ. ຂ້າງຄຳຖາມແຕ່ລະປະການໃຫ້ທ່ານຂຽນໄວ້ວ່າຄຳຖາມນັ້ນຖືກກັບຈຸດສຳຄັນໃດ? (ຄືຂຽນເລກ 1, 2, 3)
ກ. ໄທຊາມາເລຍກັບຊາວຢິວຄືຜູ້ທີ່ຖືກປຸ້ນນັ້ນພົວພັນກັນຢ່າງໃດ? ຈຸດໃດ? ____________
ຂ. ໄທຊາມາເລຍພຽງແຕ່ສົງສານຜູ້ຖືກປຸ້ນຫຼືລົງມືຊ່ອຍ? ຈຸດໃດ? ___________________
ຄ. ຖ້າວ່າຄູິດສະຕຽນດີໃຈຊ່ວຍແຕ່ຄູິດສະຕຽນຢ່າງດຽວຈະເໝາະບໍ່? ຈຸດໃດ? __________
ງ. ຖ້າວ່າເຮົາຈະເຮັດຕາມຕົວຢ່າງໄທຊາມາເລຍນັ້ນຈະມີຄ່າໃຊ້ຈ່າຍບໍ່? ຈຸດໃດ? ________
ຈ. ຖ້າເຮົາພຽງແຕ່ສົງສານຄົນທຸກຍາກຈະພໍບໍ່? ຕ້ອງເຮັດຫຍັງອີກ? ຈຸດໃດ? ___________
ສ. ໄທຊາມາເລຍຕ້ອງໃຊ້ຈ່າຍຢ່າງໃດແດ່? ຈຸດໃດ? ____________________________

**15** ໃນບົດຮຽນເລື່ອງວິທີການເທດສະໜາເຮົາໄດ້ຮຽນເລື່ອງສ່ວນປະກອບໃນບົດເທດສະໜາ ນອກຈາກຄຳແນະນຳ ມີອີກສອງສ່ວນຄື: ຄຳ _________ ແລະການໃດອີກ? __________

**16** ໃນການສອນພະຄຳພີປະຈຳໃນເຮືອນເຊັ່ນດຽວກັນ ມີສ່ວນອະທິບາຍແລະສ່ວນນຳມາໃຊ້. ໃຫ້ທ່ານກັບໄປເບິ່ງ ໃນຄຳຖາມ 14 ອີກ. ຄຳຖາມ 6 ປະການນັ້ນຄຳຖາມໃດແດ່ທີ່ເຂົ້າກັບຄຳອະທິບາຍເປັນຕົ້ນ? ____________ ຄຳຖາມໃດທີ່ເຂົ້າກັບການນຳມາໃຊ້? ____________

**17** ຍັງເວົ້າເຖິງຄຳຖາມ 14 ອີກ ຖ້າວ່າທ່ານຈະຍົກຄຳຖາມເຫຼົ່ານັ້ນຕາມລຳດັບໃນບົດສອນພະຄຳພີຈະໃຫ້ຕົກ ຕາມລຳດັບໃດ? (ເອົາຈຸດທີ 1 ອະທິບາຍ, ຈຸດທີ 2 ນຳມາໃຊ້, ຈຸດທີ 3 ອະທິບາຍ, ຈຸດທີ 4 ນຳມາໃຊ້ ແລະຕໍ່ໆໄປ)

ຈະເອົາຄຳຖາມໃດເປັນ ທີ 1. ________________ 4. ______________________

ທີ 2. ________________ 5. ______________________

ທີ 3. ________________ 6. ______________________

**18** ຄຳຖາມທີ່ຕອບໄດ້ງ່າຍກໍ່ຄື: ອັນທີ່ເຫັນຄຳຕອບໃນຕອນພະຄຳພີ. ໃນຄຳຖາມ 3 ຢ່າງຕໍ່ໄປນີ້ຢ່າງໃດຈະຕອບໄດ້ ງ່າຍກວ່າກັນ? ໃຫ້ໝາຍເອົາຂໍ້ທີ່ຖືກ

ກ. ຄຳຖາມທີ່ຕອບດ້ວຍສັງເກດ

ຂ. ຄຳຖາມທີ່ຕອບດ້ວຍອະທິບາຍ

ຄ. ຄຳຖາມທີ່ຕອບດ້ວຍການນຳມາໃຊ້

**19** ໃນໝູ່ທີ່ມາຮຽນພະຄຳພີດ້ວຍກັນນັ້ນບາງຄົນອາດຈະມັກຕອບຢູ່ເລື້ອຍໆບາງຄົນບໍ່ຢາກຕອບຈັກເທື່ອແຕ່ທ່ານຜູ້ ນຳສົມຄວນຈະໃຫ້ໂອກາດໃຫ້ທຸກຄົນຕອບ.ຖ້າວ່າມີຄົນມາໃໝ່ຫຼື ຄົນໜ້າອາຍບໍ່ຢາກປາກ ທ່ານອາດຈະຍົກຄຳຖາມຢ່າງງ່າຍທີ່ສຸດໃຫ້ເຂົາຕອບເອົາແຕ່ຄຳຖາມທີ່ຍາກໄວ້ສະເພາະເພື່ອຄົນຊຳນານແລ້ວ.

ກ. ດັ່ງນັ້ນທ່ານອາດຈະເອົາຄຳຖາມທີ່ຕອບດ້ວຍວິທີສັງເກດໃຫ້ຄົນຂີ້ອາຍ ຫຼື ຄົນຊຳນານຕອບ? ______________________________________________________

ຂ. ຄຳອະທິບາຍເດໃຫ້ຄົນໃດ? ________________________________________

ຄ. ການນຳມາໃຊ້ເດໃຫ້ຄົນໃດ? _______________________________________

**20** ເອົາລະ! ເຮົາຮຽນຮູ້ແລ້ວວ່າ ການຮຽນພະຄຳພີປະຈຳເຮືອນອາດຈະປະກອບດ້ວຍ 4 ປະການຄື: (ຈົ່ງຕື່ມຄວາມທີ່ຂາດ)

ກ. __________ ຕໍ່ ພະເຈົ້າໃຫ້ນຳ.

ຂ. __________ ຕອນພະຄຳພີ.

ຄ. __________ ກັນເລື່ອງໃນພະຄຳພີ.

ງ. ___________ ປິດ.

**21** ກ. ທ່ານຈະໃຫ້ເຂົາຄົ້ນພົບຄວາມຈິງເລື່ອງໃນພະຄຳພີດ້ວຍຍົກຫຍັງມາ? ____________

ຂ. ເປັນການສຳຄັນຫຼາຍທີ່ຈະໃຫ້ທຸກຄົນມີໂອກາດເວົ້າ ດັ່ງນັ້ນຈະຍົກຄວາມຖາມໃດມາໃຫ້ຄົນຂີ້ອາຍຕອບ? ______________________________________________________

**22** ການທີ່ຈະໃຫ້ເຂົາປຶກສາຫາລືກັນກ່ຽວກັບເລື່ອງໃນຕອນພະຄຳພີຄ້າຍຄືກັບການຕຽມຟືນໄວ້ກ່ອນຈະດັງໄຟ ຖ້າ ວ່າເຮົາຈັດຕຽມໄວ້ ດີ ໆ ໄຟຈະໄໝ້ໄດ້ ຖ້າຟືນນັ້ນບໍ່ຈັດໄວ້ດີກໍ່ຈະບໍ່ໄໝ້ດີ. ການອະທິບາຍໂດຍຍົກຄຳຖາມດ້ວຍວິທີສັງເກດແລະວິທີຕີຄວາມໝາຍປຽບທຽບກັບການຈັດຟືນໄວ້ ແຕ່ຖ້າວ່າເຮົາຈະຕຽມໄວ້ດີປານໃດກໍ່ຕາມບໍ່ມີປະໂຫຍດຈັກນ້ອຍນອກຈາກທີ່ເຮົາຈະດັງໄຟ. ເຊັ່ນດຽວກັນຖ້າວ່າເຮົາອະທິບາຍກັນເລື່ອງຄວາມໝາຍໃນຕອນພະຄຳພີນັ້ນ ແຕ່ບໍ່ນຳມາໃຊ້ໃຫ້ປະຕິບັດຕາມໃນຊີວິດກໍ່ຄ້າຍຄືກັບເຮົາຕຽມຟືນໄວ້ດີ ແຕ່ບໍ່ດັງໄຟ.

ກ. ການຕຽມຟືນໄວ້ປຽບຄືຄຳຖາມຢ່າງໃດ? ________________________________

ຂ. ການດັງໄຟເດ? ________________________________________________

**23** ກ. ເປົ້າໝາຍຂອງທ່ານທີ່ເປັນຜູ້ນຳ ຄືຈະໃຫ້ເຂົາປຶກສາຫາລືກັນເລື່ອງຄວາມຈິງໃນພະຄຳພີ ແລະເລື່ອງການປະ ຕິບັດຊີ ວິດປະຈຳວັນ. ເພື່ອໃຫ້ສຳເລັດທ່ານຈະຍົກຄຳຖາມຢ່າງໃດໄວ້ກ່ອນ? ________________________________________________

ຂ. ຕໍ່ໄປເພື່ອໃຫ້ເຂົາປະຕິບັດຕາມເລື່ອງໃນພະຄຳພີນັ້ນທ່ານຈະຍົກຄຳຖາມເລື່ອງໃດ?

_____________

ທຸກ ໆ ຈຸດໃນໂຄງຮ່າງບົດສອນຈະເຮັດຢ່າງດຽວກັນຄື ປຶກສາຫາລືກ່ຽວກັບການອະທິບາຍກ່ອນແລ້ວຕໍ່ໄປກ່ຽວກັບການນຳມາໃຊ້ທີຫຼັງ.

**24** ແຕ່ຖ້າວ່າຜູ້ທີ່ມາຮຽນເປັນຄຼິດສະຕຽນໃໝ່ ໆ ທີ່ບໍ່ຮູ້ເລື່ອງພະຄຳພີຈັກດີ້ເທື່ອເຂົາອາດຈະປຶກສາຫາລືກັນບໍ່ໄດ້ຊຳ້ ຖ້າເປັນຢ່າງນັ້ນຜູ້ນຳອາດຈະຕ້ອງແນະນຳເລື່ອງພະຄຳພີກ່ອນແລະອາດຈະຕ້ອງອະທິບາຍບາງປະການໃນພະຄຳພີໄວ້ກ່ອນຈຶ່ງຈະເປີດໃຫ້ປຶກສາຫາລືກັນໄດ້ຈຳພວກທີ່ບໍ່ຊຳນານໃນພະຄຳພີຈະບໍ່ສາມາດຮຽນຫຼາຍປານຜູ້ທີ່ຮູ້ແດ່ແລ້ວ ເພາະເຫດນັ້ນ ຜູ້ນຳຄວນຈະເລືອກສອນຈຸດໃດກ່ອນ? (ເລືອກ)

_______ ຈຸດສຳຄັນ. _______ ຈຸດບໍ່ສຳຄັນ. _______ ບໍ່ຕ້ອງເລືອກດອກ.

**25** ຖ້າວ່າໄດ້ຍົກປຶກສາຫາລືກ່ຽວກັບຈຸດທຸກຈຸດ ແລ້ວກໍ່ຖາມກັນຕອບກັນເລື່ອງວິທີ ________ ແລະ ______________ ແລ້ວຈະປິດດ້ວຍຄຳ _________________ (ຕື່ມຄວາມທີ່ຂາດ)

**26** ຄຳອ້ອນວອນປິດນັ້ນສົມຄວນຈະເນັ້ນຄຳຫຍັງເປັນຕົ້ນ? ເລືອກໝາຍເອົາຂໍ້ທີ່ຖືກ

ກ. ຍາດທຸກຄົນທີ່ເຈັບໄຂ້

ຂ. ການເຜີຍແຜ່ຂ່າວປະເສີດຕະຫຼອດທົ່ວປະເທດລາວ.

ຄ. ຂໍ ພະເຈົ້າໂຜດໃຫ້ປະຕິບັດຊີວິດຕາມທີ່ເຮົາຮຽນມາໃນພະຄຳພີ.

**27** ແຕ່ກ່ອນເຮົາຮຽນເລື່ອງຄຳອ້ອນວອນ 4 ຢ່າງໃດແດ່?

_____________________________ _______________________________

_____________________________ _______________________________

**28** ກ. ຖ້າວ່າພວກທ່ານຮຽນມາເລື່ອງຄວາມບາບໃນຊີວິດຄຼິດສະຕຽນສົມຄວນຈະປິດດ້ວຍຄວາມອ້ອນວອນ ຢ່າງໃດ? ______________________________

ຂ. ຖ້າວ່າເຮົາຮຽນເລື່ອງພະພອນທີ່ ພະເຈົ້າປະທານໃຫ້ເດ? ______________________

ຄ. ຖ້າວ່າຮຽນເລື່ອງລິດເດດອະນຸພາບຂອງ ພະເຈົ້າ ເດ? ______________________

ງ. ຄັນຮຽນເລື່ອງພາລະຂອງຄຼິດສະຕຽນຕໍ່ຄົນທຸກຍາກ ເດ? ______________________

**29** ຄຳອ້ອນວອນໃນການປິດສອນພະຄຳພີຄວນຈະເຂົ້າກັບເລື່ອງໃດ? ________________

**30** ບາດນີ້ ເຮົາຈະທວນຄືນໜ້ອຍໜຶ່ງການຮຽນພະຄຳພີໃນເຮືອນໄດ້ປຽບສອງປະການ

ກ. ຝ່າຍຜູ້ນຳໄດ້ຫຍັງ? ______________________________

ຂ. ຝ່າຍຜູ້ຮຽນເດ? ______________________________

ຄ. ຈະໃຫ້ຜູ້ມາຮຽນນັ່ງຢ່າງໃດເພື່ອໃຫ້ເຫັນໜ້າຕາກັນໝົດ? ______________________

ງ. ໃນການສອນພະຄຳພີປະຈຳເຮືອນມີບາດກ້າວ 4 ປະການໃດ? ໃຫ້ຂຽນຖືກຕາມລຳດັບ

______________________ ______________________

______________________ ______________________

*ຫວັງວ່າທ່ານຈະລົງມືຕັ້ງໝວດຮຽນພະຄຳພີປະຈຳບ້ານ ຕາມແບບທີ່ສອນມາ ໃນບົດຮຽນນີ້ແລ້ວ ອາດຈະມີຄົນຄຼິດສະຕຽນແດ່ ຫຼື ອາດຈະເປັນຄົນທີ່ບໍ່ເປັນຄຼິດສະຕຽນເທື່ອ ແຕ່ເຂົາສົນໃຈຢາກຮູ້ເລື່ອງ. ຖ້າວ່າທ່ານຍັງຢ້ານຢູ່ໃຫ້ຝຶກກັບໝູ່ເສຍກ່ອນກໍ່ໄດ້ ເພື່ອໃຫ້ຊຳນານແລ້ວຈຶ່ງໄປ.*

**31** ບົດຮຽນ ຕໍ່ ໆ ໄປນີ້ວ່າດ້ວຍການອັດສະຈັນຂອງ ພະເຢຊູແຕ່ກ່ອນຈະປິດບົດຮຽນນີ້ ເຮົາຈະບອກລ່ວງໜ້າຈັກໜ້ອຍເພື່ອໃຫ້ພວກທ່ານຕຽມຈິດໃຈໄວ້ກ່ອນ. ເຮົາຈະຮຽນເລື່ອງຫຼັກຖານຂອງອານາຈັກໃນສະໄໝປີທີ່ ພະເຢຊູ ຊື່ສຽງດີ.

ກ. ການນັ້ນຢູ່ໃນມັດທາຍບົດໃດແດ່? ______________________________

ຂ. ມີຫົວເລື່ອງໃດເປັນຕົ້ນ? ______________________________

**32** ເຖິງວ່າຫົວເລື່ອງໃຫຍ່ຄືການອັດສະຈັນກໍ່ຕາມ ແຕ່ມີເຫດການບາງປະການທີ່ບໍ່ວ່າດ້ວຍການອັດສະຈັນ. ເຫດ ການເຫຼົ່ານັ້ນອາດຈະປະກອບຫົວເລື່ອງນ້ອຍກໍ່ວ່າໄດ້ ເຫດການເຫຼົ່ານັ້ນມີຢູ່ 4 ປະການຄື:

ມທ 8:18-22 ຜູ້ທີ່ສະມັກຈະຕາມ ພະເຢຊູ

ມທ 9:9-13 ຊົງເອີ້ນເອົາມັດທາຍ

ມທ 9:14-17 ບັນຫາເລື່ອງການຖືສິນອົດອາຫານ

ມທ 9:35-38 ຊົງສົງສານປະຊາຊົນ

ໃຫ້ທ່ານເປີດເຫດການ 4 ປະການເຫຼົ່ານັ້ນວ່າຫົວເລື່ອງນ້ອຍໃນ ມັດທາຍ ບົດ 8 ແລະ 9 ຄືຫຍັງ? (ເລືອກ)

ກ. ການອັດສະຈັນຕ່າງໆ

ຂ. ຄຳເທດສະໜາຢູ່ຈ້າຍພູ

ຄ. ກ່ຽວເລື່ອງພວກສິດຜູ້ທີ່ຈະຕາມພະອົງໄປ

**33** ໃນຫົວເລື່ອງສອງປະການນັ້ນຄື: ຄວາມອັດສະຈັນ ແລະ ເລື່ອງພວກສິດ

ກ. ອັນໃດຄືຫົວເລື່ອງໃຫຍ່? ____________________

ຂ. ອັນໃດຫົວເລື່ອງນ້ອຍ? ____________________

**34** ຕໍ່ໄປເຮົາຈະວິເຄາະຄວາມອັດສະຈັນນັ້ນໄວ້ ມີທັງໝົດ 10 ປະການ ຕໍ່ໄປນີ້ມີບົດແລະຂໍ້ຈົດໄວ້ແລ້ວ. ໃຫ້ທ່ານ ຂຽນເລື່ອງຂ້າງຂໍ້ພະຄຳພີເຫຼົ່ານັ້ນ (ຕາມຕົວຢ່າງທີ່ສຳເລັດມາແລ້ວ)

ກ. ມທ 8:1-4 ____________________

ຂ. ມທ 8:5-13 ____________________

ຄ. ມທ 8:14-17 ____________________

ງ. ມທ 8:23-27 ____________________

ຈ. ມທ 8:28-34 ____________________

ສ. ມທ 9:1-8 ____________________

ຊ. ມທ 9:18-26 ____________ ແລະ ____________

ຍ. ມທ 9:27-31 ____________________

ດ. ມທ 9:32-34 ____________________

| | |
|---|---|
| ຝຶກ: | ໃຫ້ທ່ານເອົາສໍສີຂຽວຂີດເສັ້ນກ້ອງຫົວຂໍ້ເຫຼົ່ານັ້ນໃນພະຄຳພີ |

**35** ເພື່ອຈະຕຽມຕົວໄວ້ຮຽນເລື່ອງຫຼັກຖານຂອງອານາຈັກໃນ ມທ ບົດ 8-9 ນັ້ນທ່ານຮຽນຮູ້ແລ້ວວ່າ

ກ. ຫົວເລື່ອງໃຫຍ່ນັ້ນຄືຫຍັງ? ____________________

ຂ. ຫົວເລື່ອງນ້ອຍເດ? ____________________

ຄ. ໃນບົດ 8-9 ນັ້ນມີອັດສະຈັນ ຈັກປະການ? ____________________

*ໃນພາກ ສ ຕໍ່ໄປນີ້ (ບົດທີ 14-15) ເຮົາຈະຮຽນແຕ່ຫົວເລື່ອງໃຫຍ່ຄືການອັດສະຈັນຢ່າງດຽວ ຕໍ່ໄປໃນພາກ ຊ ເຮົາຈະກັບມາຮຽນຫົວເລື່ອງນ້ອຍພ້ອມກັນກັບເວລາຈະຮຽນ ມັດທາຍ ບົດ 10*

| | | |
|---|---|---|
| ຝຶກ: | ໃຫ້ທ່ານເອົາສໍສີເຫຼືອງຂີດກ້ອງຄຳທີ່ອ້າງເຖິງຜູ້ທີ່ຕິດຕາມພະອົງ | |
| | "ປະຊາຊົນຫຼວງຫຼາຍຢູ່ລວມກັນ" | ໃນ ມທ 8:18 |
| | "ເພິ່ນກໍ່ລຸກຂຶ້ນຕາມພະອົງໄປ" | ໃນ ມທ 9:9 |
| | "ພວກສິດ" | ໃນ ມທ 9:14 |
| | "ພວກສິດ" | ໃນ ມທ 9:37 |

*ຢ່າລືມຕອບບົດເສັງໂລດເດີ!*

## ຄຳຕອບ:

1 *ຢ້ານ*

2 *ງ່າຍກວ່າ*

3 *ເພາະບໍ່ຢ້ານ*

4 *ຄ. ຖືກ*

5 *ກ. ຂ. ງ. ຈ. ຊ. ແລະ ຍ. ຖືກ*

6 *ກ. ຜູ້ນຳບໍ່ຕ້ອງຢ້ານ ຂ. ຜູ້ມາຮຽນມີໂອກາດຖືກ*

7 *ປະຊຸມນະມັດສະການເຄີຍນັ່ງຕາມຮູບ ຂ ເມື່ອຢູ່ໃນເຮືອນນັ່ງຕາມຮູບ ກ*

8 *ກ. ບໍ່ຢ້ານປານໃດ. ຂ. ແລກປ່ຽນຄວາມຄິດເຫັນກັນໄດ້ຖາມກັນກໍ່ໄດ້.*

9 

10 *ກ. 4, ຂ. 3, ຄ. 2, ງ. 1*

11 *ກ. ອ້ອນວອນ ຂ. ອ່ານ ຄ. ແລກປ່ຽນຄວາມຄິດເຫັນກັນ. ງ. ອ້ອນວອນ.*

12 *ງ. ຖືກ*

13 *ຂ. ຄ. ແລະ ຈ. ຖືກ*

14 *ກ. 2 ຂ. 1 ຄ. 2 ງ. 3 ຈ. 1 ສ. 3*

15 *ອະທິບາຍ ການນຳມາໃຊ້*

16 *ອະທິບາຍ ຂໍ້ ກ. ຂ. ສ. ນຳມາໃຊ້ ຄ. ງ. ຈ.*

17 *ຂໍ້ 1. ຂ 2. ຈ 3. ກ 4. ຄ 5. ສ 6. ງ.*

18 *ກ. ຖືກ*

19 *ກ. ຄົນຊື້ອາຍ ຂ. ຄົນຊຳນານ ຄ. ຄົນຊຳນານ*

20 *ກ. ອ້ອນວອນ. ຂ. ອ່ານ. ຄ. ປຶກສາຫາລື. ງ. ອ້ອນວອນ.*

21 *ກ. ຄຳຖາມ ຂ. ຄຳຖາມທີ່ງ່າຍ (ວິທີສັງເກດ)*

22 *ກ. ອະທິບາຍ ຂ. ນຳມາໃຊ້*

23 *ກ. ອະທິບາຍ ຂ. ນຳມາໃຊ້.*

24 *ຈຸດສຳຄັນ*

25 *ອະທິບາຍ... ນຳມາໃຊ້... ອ້ອນວອນ*

26 *ຄ. ຖືກ*

27 *ທູນຂໍ ສາລະພາບຜິດບາບ ນະມັດສະການ ຂອບພະຄຸນ (ບໍ່ຖືກລຳດັບກໍ່ໄດ້)*

28 *ກ. ສາລະພາບຜິດບາບ ຂ. ຂອບພະຄຸນ ຄ. ນະມັດສະການ ງ. ທູນຂໍ*

**ຄຳຕອບ (ຕໍ່):**

**29** *ຄວນຈະເຂົ້າກັບເລື່ອງທີ່ຮຽນມາ (ຄຳ ຄ້າຍຄືນີ້ກໍ່ໄດ້)*

**30** *ກ. ບໍ່ຕ້ອງຢ້ານ ຂ. ມີໂອກາດຖາມຢູ່ດ້ວຍ ຄ. ນັ່ງແບບວົງມົນ (ຄື*  *)*

*ງ. ອ້ອນວອນ, ອ່ານພະຄຳພີ, ປຶກສາຫາລືກັນ, ອ້ອນວອນປິດ*

**31** *ກ. ບົດ 8 ແລະ 9 ຂ. ຄວາມອັດສະຈັນ*

**32** *ຄ. ຖືກ*

**33** *ກ. ຄວາມອັດສະຈັນ. ຂ. ເລື່ອງພວກສິດ (ຫຼື ຜູ້ທີ່ຕິດຕາມພະ ອົງໄປ)*

**34** *ກ. ຄົນຂີ້ທູດດີສະອາດ ຂ. ໂຜດຄົນໃຊ້ນາຍຮ້ອຍ ຄ. ໂຜດແມ່ເມຍ ເປໂຕ*

*ງ. ຫ້າມລົມແລະທະເລ ຈ. ໂຜດຊາວກາດາລາຜູ້ມີຜີສິງ ສ. ໂຜດຄົນເປັ້ຍ*

*ຊ. ລູກສາວເຈົ້ານາຍ ແລະ ຍິງເລືອດຕົກ ຍ. ຄົນຕາບອດ ສອງ ຄົນ ດ. ຄົນປາກກືກ*

**35** *ກ. ຄວາມອັດສະຈັນ ຂ. ພວກສິດ ຫຼື ຜູ້ຕິດຕາມພະອົງໄປ. ຄ. ໑໐ ປະການ.*